# ພະນະທ່ານປະທານປະເທດ ຕ້ອນຮັບນາຍົກລັດຖະມົນຕີ ສປ ຈີນ



ໃນວັນທີ 30 ມີນານີ້, ທີ່ຫ້ອງຮັບແຂກສຳນັກງານປະທານປະເທດ, ພະນະທ່ານ ຈູມມາລີ ໄຊຍະສອນ, ປະທານປະເທດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຂອງພະນະທ່ານ ເວີນ ເຈຍປາວ, ນາຍົກລັດຖະມົນຕີ ແຫ່ງ ສປປ ຈີນ ພ້ອມຄະນະ ໃນໂອກາດທີ່ເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດ GMS ຢູ່ ສປປ ລາວ.

ພະນະທ່ານປະທານປະເທດ ຈູມມາລີ ໄຊຍະສອນ ໄດ້ສະແດງຄວາມຍິນດີຕ້ອນຮັບ, ສະແດງຄວາມດີໃຈ ແລະ ຊົມເຊີຍ ທີ່ພະນະທ່ານ ເວີນ ເຈຍປາວ ໄດ້ຖືກເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ ແຫ່ງ ສປ ຈີນ ອີກໜຶ່ງສະໄໝ, ຂະນະດຽວກັນ ພະນະທ່ານປະທານປະເທດ ກໍໄດ້ສົ່ງຄວາມຢື້ຢາມຖາມຂ່າວ ແລະ ຄວາມຊົມເຊີຍອັນຈິງໃຈ ໄປຍັງພະນະທ່ານປະທານ ຮູ ຈິນທາວ ທີ່ໄດ້ຖືກເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນປະທານປະເທດ ແຫ່ງ ສປ ຈີນ ອີກໜຶ່ງສະໄໝ ແລະ ຖາມຂ່າວເຖິງບັນດາການນຳຂອງ ສປ ຈີນທຸກຖ້ອນໜ້າ. ພ້ອມທັງສະແດງຄວາມເພິ່ງພໍໃຈ ແລະ ຕີລາຄາສູງ ຕໍ່ສາຍພົວພັນມິດຕະພາບ ທີ່ມີມູນເຊື້ອ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ຈີນ ທີ່ໄດ້ມີບາດກ້າວຂະຫຍາຍຕົວ ນັບມື້ນັບສູງຂຶ້ນ; ໂດຍໄດ້ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ, ສະແດງຄວາມຮູ້ບຸນຄຸນຢ່າງຈິງໃຈ ຕໍ່ພັກ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ທີ່ໄດ້ໃຫ້ການຮ່ວມມືຊ່ວຍເຫລືອອັນລ້ຳຄ່າ ແລະ ມີປະສິດທິຜົນ ອັນເປັນການປະກອບສ່ວນທີ່ສຳຄັນ ເຮັດໃຫ້ພາລະກິດສ້າງສາພັດທະນາເສດຖະກິດ-ສັງຄົມ ແລະ ຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າ ຂະຫຍາຍຕົວດີຂຶ້ນເປັນກ້າວໆມາ.

ພະນະທ່ານປະທານປະເທດ ໄດ້ແຈ້ງສະພາບການພາຍໃນຢູ່ ສປປ ລາວ ໃຫ້ແຂກຊາບ ໂດຍສະເພາະ ຄວາມມີສະຖຽນລະພາບ ແລະ ມີຄວາມສະຫງົບ, ເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປັບປຸງດີຂຶ້ນເປັນລຳດັບ. ປະຈຸບັນ, ພັກ, ລັດຖະບານ ແລະ ປະຊາຊົນບັນດາເຜົ່າ ພວມສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດ ສອງໜ້າທີ່ຍຸດທະສາດ ຂອງພັກ ແລະ ລັດຖະບານວາງອອກ ເພື່ອນຳພາປະເທດຊາດກ້າວໄປສູ່ສັງຄົມນິຍົມເທື່ອລະກ້າວ. ໃນນັ້ນ, ແມ່ນສຸມໃສ່ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VI, ຄາດໝາຍສູ້ຊົນ ແຕ່ປີ 2006-2010 ຊຶ່ງຈະເຮັດ ໃຫ້ລະດັບການຂະຫຍາຍຕົວຂອງ GDP ຢູ່ໃນລະດັບ 7,5-8% ແລະ ສະເລັ່ຍລາຍຮັບໃຫ້ໄດ້ 700-750 ໂດລາຕໍ່ຄົນຕໍ່ປີ.

ພະນະທ່ານນາຍົກລັດຖະມົນຕີ ເວິນ ເຈຍປາວ ກໍໄດ້ຕາງໜ້າລັດຖະບານ ແລະ ປະຊາຊົນຈີນ ສະແດງຄວາມຂອບໃຈ ຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ສົມກຽດ ຂອງພັກ, ລັດຖະບານລາວ ໃນຄັ້ງນີ້, ພ້ອມທັງສະແດງຄວາມຊົມເຊີຍ ແລະ ຄວາມເພິ່ງພໍໃຈ ຕໍ່ຜົນສຳເລັດໃນການພັດທະນາ ສ້າງສາປະເທດ ສປປ ລາວ ທີ່ມີເສດຖະກິດ-ສັງຄົມ ໄດ້ຮັບການພັດທະນາຂຶ້ນຢ່າງຕໍ່ເນື່ອງ ໂດຍພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ອັນໄດ້ແກ້ໄຂຊີວິດການເປັນຢູ່ດີຂຶ້ນເປັນລຳດັບ, ນະໂອກາດນີ້ ກໍຂໍຝາກຄວາມຢື້ຢາມຖາມຂ່າວຂອງ ການນຳ ສປ ຈີນ ເຖິງບັນດາຄະນະນຳຂອງລາວ ແລະ ອວຍພອນໃຫ້ສາຍພົວພັນມິດຕະພາບທີ່ມີມູນເຊື້ອ ລະຫວ່າງສອງປະເທດ ຈົ່ງໝັ້ນຄົງຂະໜົງແກ່ນຕະຫລອດການະນານ.